ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສູນກາງແນວລາວສ້າງຊາດ

ເລກທີ 071 /ສນຊ.
ນະຄອນຫຼວງວຽງຈັນ, ວັນທີ 10 / 8 /2018.

**ຄໍາແນະນໍາ**
**ວ່າດ້ວຍການກະກຽມ ແລະ ດໍາເນີນກອງປະຊຸມໃຫຍ່**
**ຂອງແນວລາວສ້າງຊາດແຂວງ-ນະຄອນຫຼວງ, ເມືອງ-ນະຄອນ ແລະ ບ້ານ**

ເຖິງ: ປະທານແນວລາວສ້າງຊາດແຂວງ-ນະຄອນຫຼວງ ໃນຂອບເຂດທົ່ວປະເທດ.

-ອີງຕາມ ມະຕິຕົກລົງຂອງກົມການເມືອງສູນກາງພັກ ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງສູນກາງແນວລາວສ້າງຊາດ ສະບັບເລກທີ 029/ກມສພ, ລົງວັນທີ 28/12/2017.

-ອີງຕາມ ຄໍາສັ່ງແນະນໍາ ຂອງຄະນະເລຂາທິການສູນກາງພັກ ກ່ຽວກັບບຸກຄະລາກອນແນວລາວສ້າງຊາດຂັ້ນທ້ອງຖິ່ນ ສະບັບເລກທີ 19/ຄລສພ, ລົງວັນທີ 30/06/2015.

-ອີງຕາມ ກົດໝາຍ ວ່າດ້ວຍແນວລາວສ້າງຊາດ ເລກທີ 01/ສພຊ, ລົງວັນທີ 8 ກໍລະກົດ 2008 ໝວດທີ V, ມາດຕາ 20, 21 ວ່າດ້ວຍກອງປະຊຸມໃຫຍ່ຂອງແນວລາວສ້າງຊາດ ແລະ ກົດລະບຽບແນວລາວສ້າງຊາດ ສະໄໝທີ X, ໝວດທີ I, ມາດຕາ 5 ວ່າດ້ວຍກອງປະຊຸມໃຫຍ່ຂອງແນວລາວສ້າງຊາດ.

-ອີງຕາມ ແຈ້ງການ ຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 117/ຄຈສພ, ລົງວັນທີ 31/05/2018.

ແນວລາວສ້າງຊາດ ແມ່ນອົງການຈັດຕັ້ງສໍາພັນທາງດ້ານການເມືອງທົ່ວສັງຄົມ, ແມ່ນພາກສ່ວນໜຶ່ງໃນລະບົບການເມືອງຂອງລະບອບປະຊາທິປະໄຕປະຊາຊົນໂດຍແມ່ນພັກປະຊາຊົນປະຕິວັດລາວ ເປັນແກ່ນນໍາ; ມີພາລະບົດບາດເປັນເສນາທິການໃຫ້ແກ່ກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ໃນການສຶກສາອົບຮົມ ແລະ ເຕົ້າໂຮມກ້ອນກໍາລັງມະຫາສາມັກຄີທົ່ວປວງຊົນລາວທັງຊາດ; ສໍາລັບຢູ່ຂັ້ນທ້ອງຖິ່ນ ແນວລາວສ້າງຊາດ ມີພາລະບົດບາດເປັນເສນາທິການໃຫ້ແກ່ຄະນະປະຈໍາພັກຂັ້ນຂອງຕົນໃນການສຶກສາອົບຮົມ ແລະ ເຕົ້າໂຮມຄວາມສາມັກຄີປະຊາຊົນບັນດາເຜົ່າ; ເສີມຂະຫຍາຍສິດເປັນເຈົ້າປະເທດຊາດຂອງປະຊາຊົນບັນດາເຜົ່າ. ລະບົບການຈັດຕັ້ງ ຂອງ

ແນວລາວສ້າງຊາດ ມີ 4 ຂັ້ນ ປະກອບດ້ວຍ: ສູນກາງແນວລາວສ້າງຊາດ, ແນວລາວສ້າງຊາດແຂວງ-ນະຄອນຫຼວງ, ແນວລາວສ້າງຊາດເມືອງ-ນະຄອນ ແລະ ແນວລາວສ້າງຊາດບ້ານ.

ຕະຫຼອດໄລຍະຜ່ານມາ, ກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ແລະ ຄະນະພັກແຕ່ລະຂັ້ນ ໄດ້ເອົາໃຈໃສ່ໃນການນຳພາວຽກງານແນວລາວສ້າງຊາດ, ໃຫ້ຄວາມສຳຄັນກ່ຽວກັບທີ່ຕັ້ງ, ພາລະບົດບາດ, ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນຂອງແນວລາວສ້າງຊາດແຕ່ລະຂັ້ນ ເຊິ່ງສະແດງອອກໃນການອອກມະຕິ, ຄຳສັ່ງແນະນຳຂອງພັກ ເຊັ່ນ: ມະຕິກົມກົມການເມືອງສູນກາງພັກ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສູນກາງແນວລາວສ້າງຊາດ ສະບັບເລກທີ 029/ກມສພ, ລົງວັນທີ 28/12/2017; ມະຕິຂອງກົມການເມືອງສູນກາງພັກ ວ່າດ້ວຍມາດຕະຖານ ຂອງພະນັກງານນຳພາ-ຄຸ້ມຄອງ ສະບັບເລກທີ 030/ກມສພ, ລົງວັນທີ 03/01/2018 ມາດຕາ 4 ໄດ້ກຳນົດມາດຕະຖານປະທານສູນກາງແນວລາວສ້າງຊາດ ແລະ ຄຳສັ່ງແນະນຳ ຂອງຄະນະເລຂາທິການສູນກາງພັກ ກ່ຽວກັບບຸກຄະລາກອນແນວລາວສ້າງຊາດຂັ້ນທ້ອງຖິ່ນ ສະບັບເລກທີ 19/ຄລສພ, ລົງວັນທີ 30/06/2015.

ຜ່ານການຈັດຕັ້ງປະຕິບັດມະຕິຂອງກົມການເມືອງສູນກາງພັກ ແລະ ຄຳສັ່ງແນະນຳ ຂອງຄະນະເລຂາທິການສູນກາງພັກ ເຫັນວ່າໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນຂອງແນວລາວສ້າງຊາດແຕ່ລະຂັ້ນ ໄດ້ຮັບການປັບປຸງ ແລະ ຍົກສູງ, ປະທານແນວລາວສ້າງຊາດແຂວງ-ນະຄອນຫຼວງ, ເມືອງ-ນະຄອນຈຳນວນໜຶ່ງ ແມ່ນຮອງເລຂາ, ຄະນະປະຈຳພັກແຂວງ-ນະຄອນຫຼວງ, ເມືອງ-ນະຄອນ ແລະຈຳນວນໜຶ່ງເປັນກຳມະການພັກ, ຕ່ຳສຸດຢູ່ຂັ້ນແຂວງ-ນະຄອນຫຼວງ ແມ່ນກຳມະການພັກແຂວງ.

ຄຽງຄູ່ກັບດ້ານດີທີ່ກ່າວມານັ້ນ ໃນການຈັດຕັ້ງປະຕິບັດມະຕິ, ຄຳສັ່ງຂອງພັກ ກ່ຽວກັບວຽກງານກົງຈັກ ແລະບຸກຄະລາກອນຂອງແນວລາວສ້າງຊາດແຕ່ລະຂັ້ນ ເຫັນວ່າຍັງມີແຂວງ ແລະ ເມືອງຈຳນວນໜຶ່ງຍັງຈັດຕັ້ງປະຕິບັດບໍ່ທັນໄດ້ດີເທົ່າທີ່ຄວນ, ໂດຍສະເພາະ ປະທານແນວລາວສ້າງຊາດແຂວງ ແລະ ເມືອງຈຳນວນໜຶ່ງ ແມ່ນກຳມະການພັກແຂວງ, ກຳມະການພັກເມືອງເທົ່ານັ້ນ. ນອກຈາກນັ້ນ, ຍັງມີເມືອງຈຳນວນໜຶ່ງ ປະທານແນວລາວສ້າງຊາດ ບໍ່ມີຕຳແໜ່ງພັກ ຫຼື ມີບາງເມືອງໄດ້ຄົ້ນຄວ້າເອົາຫົວໜ້າຫ້ອງການ, ໜ່ວຍງານຂອງເມືອງ ທີ່ມີອາຍຸສູງມາເປັນປະທານແນວລາວສ້າງຊາດເພື່ອລໍຖ້າຮັບນະໂຍບາຍບຳນານ; ມີບາງເມືອງໄດ້ເອົາຜູ້ທີ່ມີບັນຫາ, ເສຍບົດບາດ, ຜິດວິໄນ ມາເປັນປະທານແນວລາວສ້າງຊາດເມືອງ.

ເພື່ອເຮັດໃຫ້ການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ ຂອງແນວລາວສ້າງຊາດແຂວງ-ນະຄອນຫຼວງ, ເມືອງ-ນະຄອນ ແລະ ບ້ານ ໃນຂອບເຂດທົ່ວປະເທດຖືກຕ້ອງຕາມກົດລະບຽບຂອງແນວລາວສ້າງຊາດ ສະໄໝທີ X, ໂດຍສະເພາະ ດ້ານບຸກຄະລາກອນຜູ້ທີ່ຈະເປັນປະທານ, ຮອງປະທານ ແລະ ກຳມະການແນວລາວສ້າງຊາດ ໃຫ້ຖືກຕ້ອງຕາມມາດຖານ, ເງື່ອນໄຂ ແລະ ຮັບປະກັນໂຄງປະກອບດ້ານບຸກຄະລາກອນຂອງແນວລາວສ້າງຊາດຂັ້ນທ້ອງຖິ່ນ ຕາມທີ່ກຳນົດໃນຄຳສັ່ງແນະນຳຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 19/ຄລສພ, ລົງວັນທີ 30/06/2015.

**ຄະນະກຳມະການສູນກາງແນວລາວສ້າງຊາດ ອອກຄຳແນະນຳ :**

## I. ຈຸດປະສົງ, ລະດັບຄາດໝາຍ.

1.1 ເພື່ອເຮັດໃຫ້ການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ຂອງແນວລາວສ້າງຊາດຂັ້ນ

ທ້ອງຖິ່ນດຳເນີນໄປຖືກຕ້ອງຕາມກົດລະບຽບແນວລາວສ້າງຊາດ ສະໄໝທີ X, ຮັບປະກັນຄວາມເປັນເອກະພາບທາງດ້ານໂຄງຮ່າງບົດລາຍງານການເມືອງ, ໂຄງປະກອບດ້ານບຸກຄະລາກອນ ແລະ ໄລຍະເວລາດຳເນີນກອງປະຊຸມ.

1.2 ເພື່ອຍົກສູງບົດບາດ ແລະ ເພີ່ມທະວີຄວາມສາມາດໃນການນຳພາຂອງແນວລາວສ້າງຊາດຂັ້ນທ້ອງຖິ່ນໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ.

1.3 ເພື່ອແນໃສ່ໃຫ້ຄະນະປະຈຳພັກແຂວງ-ນະຄອນຫຼວງ, ເມືອງ-ນະຄອນ ແລະ ຄະນະໜ່ວຍພັກບ້ານໃນຂອບເຂດທົ່ວປະເທດ ຖືສຳຄັນໃນການຄົ້ນຄວ້າປະກອບບຸກຄະລາກອນເປັນການນຳຂອງແນວລາວສ້າງຊາດຂັ້ນຂອງຕົນ ຖືກຕ້ອງຕາມມາດຖານ ແລະ ເງື່ອນໄຂ ຄຳສັ່ງແນະນຳຂອງຄະນະເລຂາທິການສູນກາງພັກ ກ່ຽວກັບບຸກຄະລາກອນແນວລາວສ້າງຊາດຂັ້ນທ້ອງຖິ່ນ ສະບັບເລກທີ 19/ຄລສພ, ລົງວັນທີ 30/06/2015.

1.4 ເພື່ອແນໃສ່ປັບປຸງດ້ານບຸກຄະລາກອນ ຂອງແນວລາວສ້າງຊາດ ຂັ້ນທ້ອງຖິ່ນ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ ທັງຮັບປະກັນທາງດ້ານຈຳນວນ ແລະ ຄຸນນະພາບ ເພື່ອໃຫ້ສາມາດເຄື່ອນໄຫວປະຕິບັດໜ້າທີ່ການເມືອງໃນໄລຍະໃໝ່ ຕາມພາລະບົດບາດຂອງຕົນ ໃຫ້ມີປະສິດທິພາບສູງຂຶ້ນ.

## II. ເນື້ອໃນການກະກຽມໃຫ້ແກ່ການດຳເນີນກອງປະຊຸມໃຫຍ່ຂອງແນວລາວສ້າງຊາດຂັ້ນທ້ອງຖິ່ນ.

### 2.1 ຂະບວນການ.

(1). ສ້າງຂະບວນການຮອບດ້ານໃນການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ແນວລາວສ້າງຊາດແຕ່ລະຂັ້ນ ຕິດພັນກັບຂະບວນການກະກຽມກອງປະຊຸມໃຫຍ່ອົງຄະນະພັກແຂວງ-ນະຄອນຫຼວງ, ເມືອງ-ນະຄອນ ແລະ ຮາກຖານພັກ ແຕ່ນີ້ ຮອດປີ 2020 ໃຫ້ເປັນຂະບວນການທີ່ຟົດຟື້ນ ແລະ ກວ້າງຂວາງ.

(2). ສືບຕໍ່ຫັນເອົາພະນັກງານການນຳ ແລະ ພະນັກງານຫຼັກແຫຼ່ງຂັ້ນຕ່າງໆ ຂອງແນວລາວສ້າງຊາດ ຜູ້ທີ່ມີເປົ້າໝາຍໃນການກໍ່ສ້າງເປັນພະນັກງານສືບທອດປ່ຽນແທນ ເພື່ອເຂົ້າຮ່ວມຂະບວນການລົງກໍ່ສ້າງຮາກຖານການເມືອງ, ປະກອບສ່ວນຢ່າງຕັ້ງໜ້າໃນຂະບວນບວນການຕ່າງໆ ຕິດພັນກັບວຽກງານ 3 ສ້າງ, ຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ, ຂະບວນການສ້າງຄອບຄົວ-ບ້ານສາມັກຄີປອງດອງຂອງແນວລາວສ້າງຊາດ, ປະກອບສ່ວນນຳຄະນະພັກ, ອົງການປົກຄອງຂັ້ນຂອງຕົນໃນການປັບປຸງລະບົບການເມືອງຢູ່ຮາກຖານ, ໂດຍສະເພາະ ແມ່ນສຸມໃສ່ລົງເລິກໃນການປັບປຸງກົງຈັກ, ບຸກຄະລາກອນ ຂອງແນວລາວສ້າງຊາດຂັ້ນເມືອງ-ນະຄອນ ແລະ ບ້ານ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ, ປະຕິບັດຕາມ 4 ເນື້ອໃນ 4 ຄາດໝາຍ, ປຸກລະດົມຂົນຂວາຍປະຊາຊົນບັນດາເຜົ່າປະກອບສ່ວນເຂົ້າໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຂະບວນການພັດທະນາເສດຖະກິດ-ສັງຄົມ, ແກ້ໄຂຄວາມທຸກຍາກຂອງປະຊາຊົນ, ການສະກັດກັ້ນ ແລະ ແກ້ໄຂບັນຫາປະກົດການຫຍໍ້ທໍ້ຕ່າງໆໃນຄອບຄົວ, ສັງຄົມ. ຜ່ານຂະບວນການວຽກງານຕົວຈິງເພື່ອກໍ່ສ້າງ, ເລືອກເຟັ້ນ ເອົາບຸກຄະລາກອນທີ່ມີມາດຖານ, ເງື່ອນໄຂຄົບຖ້ວນເຂົ້າໃນໂຄງປະກອບບຸກຄະລາກອນຂອງແນວລາວສ້າງຊາດແຕ່ລະຂັ້ນ.

(3). ເອົາໃຈໃສ່ຊຸກຍູ້ວຽກງານໂຄສະນາສຶກສາອົບຮົມ ແລະ ເຕົ້າໂຮມຄວາມສາມັກຄີປະຊາຊົນບັນດາເຜົ່າ, ສາສະໜາ, ຊັ້ນຄົນ-ການຈັດຕັ້ງສັງຄົມ; ອະນຸລັກຮີດຄອງປະເພນີ ແລະ ມູນເຊື້ອວັດທະນະທຳອັນດີງາມທີ່ເປັນເອກະລັກຂອງຊາດ, ຂອງຊົນເຜົ່າ; ສ້າງຂະບວນການສິລະປະ, ວັນນະຄະດີ, ກິລາ ແລະ ສ້າງຂະບວນການອື່ນໆຢ່າງຟົດຟື້ນ, ກວ້າງຂວາງ ບົນພື້ນຖານປະຢັດ, ບໍ່ຟຸ້ມເຟືອຍ, ແຕ່ຮັບປະກັນໄດ້ທັງຮູບການ ແລະ ເນື້ອໃນທີ່ສ່ອງແສງໃຫ້ເຫັນເຖິງການສ້າງຄວາມສາມັກຄີປອງດອງທົ່ວສັງຄົມ.

2.2 ເນື້ອໃນ.

ຮ່າງລາຍງານການເມືອງຕໍ່ກອງປະຊຸມໃຫຍ່ແນວລາວສ້າງຊາດ ແບ່ງອອກເປັນ 2 ພາກ ຄື:

ພາກທີ I: ສັງລວມຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຂອງຄົບໄລຍະຜ່ານມາ. ໂດຍຍົກໃຫ້ເຫັນດ້ານດີ, ດ້ານຄົງຄ້າງ, ສາເຫດທີ່ພາໃຫ້ມີຈຸດດີ, ຈຸດຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້.

ພາກທີ II: ຄາດໝາຍສູ້ຊົນ, ທິດທາງວຽກງານຕົ້ນຕໍ ໃນຕໍ່ໜ້າ. ບັນດາຄາດໝາຍສູ້ຊົນ ແລະ ທິດທາງວຽກງານຕໍ່ໜ້າຂອງແນວລາວສ້າງຊາດແຕ່ລະຂັ້ນ ຕ້ອງໃຫ້ສອດຄ່ອງກັບແນວທາງຂອງພັກ, ນະໂຍບາຍ, ວິໄສທັດ ແລະ ຍຸດທະສາດການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ມະຕິກອງປະຊຸມໃຫຍ່ ຂອງອົງຄະນະພັກແຂວງ-ນະຄອນຫຼວງ, ເມືອງ-ນະຄອນ ແລະ ໜ່ວຍພັກບ້ານ, ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ-ນະຄອນຫຼວງ, ເມືອງ-ນະຄອນ ແລະ ວິໄສທັດຮອດປີ 2030, ແຜນຍຸດທະສາດ ເພື່ອພັດທະນາພະນັກງານແນວລາວສ້າງຊາດ (2016-2025).

ຮ່າງລາຍງານການເມືອງຕ້ອງສ່ອງແສງໃຫ້ເຫັນສະພາບຕົວຈິງ, ພາວະວິໄສ ແລະ ສອດຄ່ອງກັບສະພາບ ຈຸດພິເສດຂອງແຕ່ລະທ້ອງຖິ່ນ.

2.3 ການກະກຽມດ້ານບຸກຄະລາກອນ.

ການຄົ້ນຄວ້າຄັດເລືອກເປົ້າໝາຍບຸກຄະລາກອນທີ່ຈະເປັນປະທານ, ຮອງປະທານ, ຄະນະປະຈຳ ແລະ ກຳມະການແນວລາວສ້າງຊາດຂັ້ນແຂວງ-ນະຄອນຫຼວງ, ເມືອງ-ນະຄອນ ແມ່ນກຳມະການແນວລາວສ້າງຊາດຂັ້ນນັ້ນ ຄົ້ນຄວ້າປຶກສາຫາລື ແລະ ສະເໜີຕໍ່ຄະນະປະຈຳພັກຂັ້ນຂອງຕົນຕົກລົງເປັນເອກະພາບ. ການຄົ້ນຄວ້າຄັດເລືອກເປົ້າໝາຍປະທານ, ຮອງປະທານ, ຄະນະປະຈຳ ແລະ ກຳມະການແນວລາວສ້າງຊາດແຕ່ລະຂັ້ນ ຕ້ອງຮັບປະກັນຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ; ບຸກຄະລາກອນທີ່ຈະປະກອບເຂົ້າເປັນປະທານ, ຮອງປະທານ, ຄະນະປະຈຳ ແລະ ກຳມະການແນວລາວສ້າງຊາດແຕ່ລະຂັ້ນຕ້ອງຮັບປະກັນໃຫ້ຖືກຕ້ອງຕາມຄຳສັ່ງແນະນຳຂອງຄະນະເລຂາທິການສູນກາງພັກ ກ່ຽວກັບບຸກຄະລາກອນແນວລາວສ້າງຊາດຂັ້ນທ້ອງຖິ່ນ ສະບັບເລກທີ 19/ຄລສພ, ລົງວັນທີ 30/06/2015 ເຊິ່ງໄດ້ກຳນົດມາດຖານ ແລະ ເງື່ອນໄຂ ດັ່ງນີ້:

ກ. ມາດຖານ, ເງື່ອນໄຂ.

(1). ດ້ານຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ: ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ມີຄວາມຈົງຮັກພັກດີຕໍ່ອຸດົມການສັງຄົມນິຍົມ, ຕໍ່ປະເທດຊາດ ແລະປະຊາຊົນ, ມີຄວາມເປັນເອກະພາບສູງຕໍ່ແນວທາງການປ່ຽນແປງໃໝ່ຂອງພັກ, ມີນ້ຳໃຈຮັບໃຊ້ປະຊາຊົນ; ເປັນຜູ້ມີບົດບາດ, ໄດ້ຮັບຄວາມເຄົາລົບນັບຖື, ໄວ້ເນື້ອເຊື່ອໃຈຈາກມະຫາຊົນແລະ ປະຊາຊົນບັນດາເຜົ່າ,

ມີຄວາມສາມັກຄີກວ້າງຂວາງ, ບໍ່ມີແນວຄິດຈຸ້ມເຈື້ອ ເຊື້ອສາຍ; ເປັນແບບຢ່າງໃນການປະຕິບັດກົດໝາຍ, ລະບຽບການ, ມີແບບແຜນດຳລົງຊີວິດທີ່ປອດໃສ, ບໍ່ສວຍໂອກາດ, ບໍ່ໃຊ້ສິດອຳນາດ ແລະ ບໍ່ສວຍໃຊ້ໜ້າທີ່ຕຳແໜ່ງເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ.

(2). ດ້ານຄວາມຮູ້: ມີຄວາມຮູ້ ແລະ ກຳແໜ້ນແນວທາງການເມືອງຂອງພັກ, ນະໂຍບາຍ ແລະ ກົດໝາຍ, ລະບຽບການ, ແຜນພັດທະນາເສດຖະກິດ-ສັງຄົມ, ເອົາໃຈໃສ່ປັບປຸງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ; ຮູ້ນຳພາເຕົ້າໂຮມຄວາມສາມັກຄີປອງດອງ, ຮູ້ປຸກລະດົມຂົນຂວາຍປະຊາຊົນບັນດາເຜົ່າ ໃນການຈັດຕັ້ງປະຕິບັດແນວທາງຂອງພັກ, ນະໂຍບາຍ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ.

(3). ດ້ານຄວາມສາມາດ: ສາມາດກຳແໜ້ນແນວທາງປ່ຽນແປງໃໝ່ຂອງພັກ ແລະ ກົດໝາຍ, ລະບຽບການຂອງລັດໃນແຕ່ລະໄລຍະ, ໂດຍສະເພາະ ແມ່ນສາມາດກຳໄດ້ສະພາບ ຈຸດພິເສດ ແລະ ທ່າແຮງຂອງແຕ່ລະຊົນເຜົ່າ; ສາມາດນຳພາເຕົ້າໂຮມຄວາມສາມັກຄີປອງດອງ, ປຸກລະດົມຊຸ້ມຊົນຕ່າງໆປະຕິບັດແນວທາງ, ມະຕິ, ຄຳສັ່ງຂອງພັກ, ນະໂຍບາຍ, ລະບຽບກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມ, ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ວຽກງານທີ່ໄດ້ຮັບການມອບໝາຍ; ມີຄວາມສາມາດໃນການຄົ້ນຄວ້າ ແລະ ຫັນເອົາແນວທາງ, ນະໂຍບາຍຂອງພັກ-ລັດ ມາເປັນແຜນງານ, ໂຄງການ, ກິດຈະກຳໃນຂອບເຂດຄວາມຮັບຜິດຊອບຂອງຕົນ, ສາມາດເປັນຄັນທຸງໃນການເຕົ້າໂຮມຄວາມສາມັກຄີປະຊາຊົນບັນດາເຜົ່າຢ່າງກວ້າງຂວາງ, ສາມາດແກ້ໄຂ, ໄກ່ເກ່ຍຂໍ້ຂັດແຍ່ງຂອງປະຊາຊົນຢູ່ທ້ອງຖິ່ນຕົນ.

(4). ແບບແຜນວິທີເຮັດວຽກ: ມີແບບແຜນນຳພາ ແລະ ວິທີເຮັດວຽກທີ່ຖືກຕ້ອງ, ມີວິທະຍາສາດ, ເຄົາລົບ ແລະປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ມີຫົວຄິດປະດິດສ້າງ, ກ້າຄິດ, ກ້າເຮັດ, ກ້າຮັບຜິດຊອບ ແລະ ມີຄວາມຍຸຕິທຳ, ມີທັດສະນະມະຫາຊົນ, ລົງໃກ້ຊິດຕິດແທດກັບປະຊາຊົນ, ຮູ້ຟັງ ແລະ ເກັບກຳເອົາຄວາມຄິດເຫັນຂອງປະຊາຊົນ ເພື່ອນຳສະເໜີຕໍ່ອົງການຈັດຕັ້ງພັກ-ລັດທີ່ກ່ຽວຂ້ອງນຳໄປຄົ້ນຄວ້າແກ້ໄຂ; ມີປະສົບການໃນໜ້າທີ່ວຽກງານ ແລະ ຮູ້ເສີມຂະຫຍາຍບົດບາດຂອງແນວລາວສ້າງຊາດ ແລະ ກຳລັງແຮງຂອງອົງການຈັດຕັ້ງມະຫາຊົນ.

(5). ຕຳແໜ່ງພັກ: ບຸກຄະລາກອນທີ່ຈະແຕ່ງຕັ້ງເປັນປະທານແນວລາວສ້າງຊາດແຂວງ - ນະຄອນຫຼວງ, ເມືອງ-ນະຄອນ ຕ້ອງມີຕຳແໜ່ງຄະນະປະຈຳພັກຂຶ້ນໄປ.

(6). ດ້ານສຸຂະພາບ: ມີສຸຂະພາບແຂງແຮງດີ ແລະ ສາມາດປະຕິບັດໜ້າທີ່ວຽກງານໄດ້ເປັນປົກກະຕິ.

(7). ບຸກຄະລາກອນທີ່ຈະແຕ່ງຕັ້ງບັນຈຸເຂົ້າເປັນປະທານ, ຮອງປະທານ, ຄະນະປະຈຳ ແລະ ກຳມະການແນວລາວສ້າງຊາດ ຂັ້ນແຂວງ-ນະຄອນຫຼວງ, ເມືອງ-ນະຄອນ ຕ້ອງແມ່ນກອງປະຊຸມໃຫຍ່ ຫຼື ກອງປະຊຸມສາມັນ, ວິສາມັນ ຂອງແນວລາວສ້າງຊາດຂັ້ນນັ້ນ ເປັນຜູ້ປຶກສາຫາລືສະເໜີແຕ່ງຕັ້ງດ້ວຍການຮັບຮອງເອົາ, ໂດຍບົນພື້ນຖານການຕົກລົງເຫັນດີ ຂອງຄະນະປະຈຳພັກແຂວງ-ນະຄອນຫຼວງ, ເມືອງ-ນະຄອນ.

(8). ບໍ່ໃຫ້ເອົາຜູ້ທີ່ເສຍບົດບາດ, ມີບັນຫາດ້ານເສດເສດຖະກິດ, ການສໍ້ລາດບັງຫຼວງ ແລະ ຂາດຄວາມເປັນແບບຢ່າງໃນການປະຕິບັດກົດລະບຽບຂອງພັກ, ລະບຽບກົດໝາຍຂອງລັດ ເປັນປະທານ, ຮອງປະທານ, ຄະນະປະຈຳ ແລະ ກຳມະການແນວລາວສ້າງຊາດແຕ່ລະຂັ້ນ.

ນອກຈາກການກະກຽມເປົ້າໝາຍບຸກຄະລາກອນທີ່ຈະເປັນປະທານ, ຮອງປະທານ, ຄະນະປະຈຳ, ກຳມະການແນວລາວສ້າງຊາດ ຂັ້ນແຂວງ-ນະຄອນຫຼວງ, ເມືອງ-ນະຄອນ ແລ້ວຍັງຕ້ອງໄດ້ຄົ້ນເປົ້າໝາຍຮອງປະທານບໍ່ປະຈຳການ, ຄະນະທີ່ປຶກສາ ແລະ ຄູ່ຮ່ວມງານຂອງແນວລາວສ້າງຊາດຂັ້ນຂອງຕົນ ເພື່ອຊ່ວຍແກ້ໄຂວຽກງານໃຫ້ມີປະສິດທິຜົນສູງ. ພາຍຫຼັງສຳເລັດກອງປະຊຸມໃຫຍ່ຂັ້ນຂອງຕົນແລ້ວ ຄະນະປະຈຳແນວລາວສ້າງຊາດແຂວງ-ນະຄອນຫຼວງ, ເມືອງ-ນະຄອນ ຕ້ອງຄົ້ນຄວ້າສະເໜີແຕ່ງຕັ້ງຮອງປະທານບໍ່ປະຈຳການ, ຄະນະທີ່ປຶກສາ ແລະ ຄູ່ຮ່ວມງານຂອງຕົນຕາມເງື່ອນໄຂຕົວຈິງ.

ສຳລັບເປົ້າໝາຍບຸກຄະລາກອນທີ່ຈະເປັນປະທານ, ຮອງປະທານ ແລະ ກຳມະການແນວລາວສ້າງຊາດຂັ້ນບ້ານ ແມ່ນໃຫ້ແນວລາວສ້າງຊາດເມືອງ-ນະຄອນ ລົງສົມທົບກັບຄະນະພັກຮາກຖານ ແລະ ອົງການປົກຄອງບ້ານ ເພື່ອຄົ້ນຄວ້າຄັດເລືອກເອົາຜູ້ທີ່ມີບົດບາດ, ໄດ້ຮັບຄວາມໄວ້ເນື້ອເຊື່ອໃຈ ແລະ ເຄົາລົບນັບຖືຈາກມະຫາຊົນ ແລະ ປະຊາຊົນພາຍໃນບ້ານ, ຮູ້ເຮັດວຽກງານການເມືອງ-ແນວຄິດ ເພື່ອສຶກສາອົບຮົມ, ປຸກລະດົມຂົນຂວາຍ ແລະ ເຕົ້າໂຮມປະຊາຊົນພາຍໃນບ້ານ ໃຫ້ມີຄວາມສາມັກຄີປອງດອງ, ມີຄວາມເປັນແບບຢ່າງໃນການເຄົາລົບລະບຽບກົດໝາຍ, ມີຄວາມຕື່ນຕົວທາງດ້ານການເມືອງ, ສາມາດປຸກລະດົມຂົນຂວາຍປະຊາຊົນພາຍໃນບ້ານເຂົ້າຮ່ວມຈັດຕັ້ງປະຕິບັດແນວທາງ, ນະໂຍບາຍ ແລະ ລະບຽບກົດໝາຍ, ການພັດທະນາເສດຖະກິດ-ສັງຄົມເພື່ອແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນພາຍໃນບ້ານ ກໍຄືຂະບວນການລວມຂອງບ້ານ. ສຳລັບປະທານແນວລາວສ້າງຊາດຂັ້ນບ້ານ ຕ້ອງແມ່ນຄະນະພັກຮາກຖານ, ຄະນະໜ່ວຍພັກບ້ານ ຫຼື ເປັນຄະນະບ້ານຂຶ້ນໄປ.

**ຂ. ໂຄງປະກອບບຸກຄະລາກອນ.**

ໂຄງປະກອບບຸກຄະລາກອນ: ປະທານ, ຮອງປະທານ, ຄະນະປະຈຳ ແລະ ກຳມະການ, ຮອງປະທານບໍ່ປະຈຳການ, ຄະນະທີ່ປຶກສາ ແລະ ຄູ່ຮ່ວມງານ ແນວລາວສ້າງຊາດ ຂັ້ນທ້ອງຖິ່ນ.

**(1). ແນວລາວສ້າງຊາດແຂວງ-ນະຄອນຫຼວງ ປະກອບດ້ວຍ:**

1. ປະທານ.
2. ຮອງປະທານ 2-3 ທ່ານ.
3. ຄະນະປະຈຳ 5-7 ທ່ານ.
4. ກຳມະການແນວລາວສ້າງຊາດຈຳນວນໜຶ່ງ.
5. ຮອງປະທານບໍ່ປະຈຳການ 1-2 ທ່ານ.
6. ຄະນະທີ່ປຶກສາ ແລະ ຄູ່ຮ່ວມງານແຕ່ລະຄະນະ 9-11 ທ່ານ.

**(2). ແນວລາວສ້າງຊາດເມືອງ-ນະຄອນ ປະກອບດ້ວຍ:**

1. ປະທານ.
2. ຮອງປະທານ 1-2 ທ່ານ.
3. ຄະນະປະຈຳ 3-5 ທ່ານ.
4. ກຳມະການແນວລາວສ້າງຊາດຈຳນວນໜຶ່ງ.
5. ຮອງປະທານບໍ່ປະຈຳການ 1 ທ່ານ.
6. ຄະນະທີ່ປຶກສາ ແລະ ຄູ່ຮ່ວມງານແຕ່ລະຄະນະ 5-9 ທ່ານ.

**(3). ແນວລາວສ້າງຊາດບ້ານ ປະກອບດ້ວຍ:**

1. ປະທານ.

2. ຮອງປະທານ 2 ທ່ານ.

3. ກຳມະການແນວລາວສ້າງຊາດຈຳນວນໜຶ່ງ.

ຈຳນວນກຳມະການແນວລາວສ້າງຊາດແຂວງ-ນະຄອນຫຼວງ, ເມືອງ-ນະຄອນ ແມ່ນມອບໃຫ້ແນວລາວສ້າງຊາດ ສະເໜີຄະນະປະຈຳພັກຂັ້ນຂອງຕົນເປັນຜູ້ຄົ້ນຄວ້າ ຕົກລົງຕາມຄວາມເໝາະສົມ, ໂດຍອີງໃສ່ຈຳນວນປະຊາກອນ ແລະ ຈຳນວນຊົນເຜົ່າຂອງແຂວງ-ນະຄອນຫຼວງ, ເມືອງ-ນະຄອນ ເປັນຕົວກຳນົດ.

ໂຄງປະກອບກຳມະການແນວລາວສ້າງຊາດແຕ່ລະຂັ້ນ ໃຫ້ປະກອບມີຊົນເຜົ່າ, ເພດຍິງ, ຕາງໜ້າຊັ້ນຄົນ, ປັນຍາຊົນ, ຜູ້ຊົງຄຸນວຸດທິ, ຕາງໜ້າສາສະໜາ, ນັກທຸລະກິດ ແລະ ອົງການຈັດຕັ້ງສັງຄົມທີ່ມີຄວາມກ້າວ ໜ້າຢູ່ໃນທ້ອງຖິ່ນຕົນ.

## III. ກຳນົດໄລຍະເວລາດຳເນີນກອງປະຊຸມໃຫຍ່ຂອງແນວລາວສ້າງຊາດແຕ່ລະຂັ້ນ.

ເພື່ອຮັບປະກັນໃຫ້ບຸກຄະລາກອນຜູ້ທີ່ຈະເປັນປະທານແນວລາວສ້າງຊາດແຕ່ລະຂັ້ນ ໄດ້ຕາມມາດຖານ ແລະເງື່ອນໄຂຄຳສັ່ງແນະນຳຂອງຄະນະເລຂາທິການສູນກາງພັກ ກ່ຽວກັບບຸກຄະລາກອນແນວລາວສ້າງຊາດຂັ້ນທ້ອງຖິ່ນ ສະບັບເລກທີ 19/ຄລສພ, ລົງວັນທີ 30/06/2015. ສະນັ້ນ, ໃຫ້ແນວລາວສ້າງຊາດແຂວງ-ນະຄອນຫຼວງ, ເມືອງ-ນະຄອນ ແລະ ບ້ານ ດຳເນີນກອງປະຊຸມໃຫຍ່ຂອງຕົນພາຍຫຼັງສຳເລັດກອງປະຊຸມໃຫຍ່ຂອງອົງຄະນະພັກແຂວງ-ນະຄອນຫຼວງ, ເມືອງ-ນະຄອນ ແລະ ຮາກຖານບ້ານ.

**ກ. ກຳນົດໄລຍະເວລາດຳເນີນກອງປະຊຸມໃຫຍ່.**

(1). ແນວລາວສ້າງຊາດແຂວງ-ນະຄອນຫຼວງ: ໃຫ້ດຳເນີນກອງປະຊຸມໃຫຍ່ພາຍຫຼັງສຳເລັດກອງປະຊຸມໃຫຍ່ຂອງອົງຄະນະພັກແຂວງ-ນະຄອນຫຼວງ (ລະຫວ່າງທ້າຍປີ 2020, ກຳນົດເວລາ 2 ວັນ).

(2). ແນວລາວສ້າງຊາດເມືອງ-ນະຄອນ: ໃຫ້ດຳເນີນກອງປະຊຸມໃຫຍ່ພາຍຫຼັງສຳເລັດກອງປະຊຸມໃຫຍ່ຂອງອົງຄະນະພັກເມືອງ-ນະຄອນ (ລະຫວ່າງກາງປີ 2020, ກຳນົດເວລາ 1 ວັນເຄິ່ງ).

(3). ແນວລາວສ້າງຊາດບ້ານ: ໃຫ້ດຳເນີນກອງປະຊຸມໃຫຍ່ພາຍຫຼັງກອງປະຊຸມໃຫຍ່ຂອງໜ່ວຍພັກບ້ານ (ລະຫວ່າງທ້າຍປີ 2019, ກຳນົດເວລາ 1 ວັນ).

## IV. ວິທີຈັດຕັ້ງປະຕິບັດ.

1. ຄະນະປະຈຳສູນກາງແນວລາວສ້າງຊາດ ຕ້ອງໄດ້ເອົາໃຈໃສ່ລົງຊຸກຍູ້ ໂດຍສົມທົບນຳຄະນະປະຈຳພັກແຂວງ ແລະ ອົງການປົກຄອງທ້ອງຖິ່ນເພື່ອສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ແກ່ແນວລາວສ້າງຊາດແຕ່ລະຂັ້ນ ສາມາດຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍຄຳແນະນຳສະບັບນີ້ໃຫ້ປະກົດຜົນເປັນຈິງ.

2. ຄະນະກຳມະການແນວລາວສ້າງຊາດແຕ່ລະຂັ້ນ ຕ້ອງໄດ້ນຳເອົາເນື້ອໃນສະບັບນີ້ ລາຍງານຕໍ່ຄະນະປະຈຳພັກຂັ້ນຂອງຕົນຮັບຊາບ ເພື່ອຂໍທິດຊີ້ນຳໃນການຈັດຕັ້ງປະຕິບັດ ແລະ ຜັນຂະ

ຂະຫຍາຍ ໃຫ້ສອດຄ່ອງກັບສະພາບເງື່ອນໄຂ ແລະ ຈຸດພິເສດຂອງແຕ່ລະທ້ອງຖິ່ນ.

3. ແນວລາວສ້າງຊາດແຕ່ລະຂັ້ນ ຕ້ອງໄດ້ນຳເອົາເນື້ອໃນຄຳແນະນຳສະບັບນີ້ ໄປເຜີຍແຜ່ເຊື່ອມຊືມໃຫ້ບັນດາກຳມະການແນວລາວສ້າງຊາດ, ອົງການພາຄີ, ພະນັກງານ-ລັດຖະກອນ ແລະ ພາກສ່ວນກ່ຽວຂ້ອງຮັບຊາບຢ່າງທົ່ວເຖິງ ເພື່ອສ້າງຄວາມຮັບຮູ້ເຂົ້າໃຈ, ເປັນເອກະພາບ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດ.

4. ຜ່ານການຈັດຕັ້ງປະຕິບັດຕົວຈິງຢູ່ແຕ່ລະທ້ອງຖິ່ນ, ຖ້າຫາກມີບັນຫາໃດບໍ່ທັນຈະແຈ້ງ ຫຼື ພົບຂໍ້ຫຍຸ້ງຍາກ ໃຫ້ແນວລາວສ້າງຊາດແຂວງ-ນະຄອນຫຼວງ ລາຍງານຕໍ່ຄະນະປະຈຳ ສູນກາງແນວລາວສ້າງຊາດຮັບຊາບ ເພື່ອໃຫ້ການຊີ້ນຳ ແກ້ໄຂທັນເວລາ.

5. ພາຍຫຼັງສຳເລັດກອງປະຊຸມໃຫຍ່ແນວລາວສ້າງຊາດຂັ້ນຂອງຕົນ ໃຫ້ສະຫຼຸບ ຖອດຖອນບົດຮຽນ ແລ້ວລາຍງານຕໍ່ຄະນະປະຈຳພັກຂັ້ນຂອງຕົນ ແລະແນວລາວສ້າງຊາດຂັ້ນເທິງຕົນຮັບຊາບ.

6. ມອບໃຫ້ແນວລາວສ້າງຊາດແຂວງ-ນະຄອນຫຼວງ ສັງລວມເອົາຜົນຂອງການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ກໍຄືຜົນຂອງການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ແນວລາວສ້າງຊາດຂັ້ນບ້ານ, ເມືອງ-ນະຄອນ ແລະ ແຂວງ-ນະຄອນຫຼວງ ເພື່ອລາຍງານໃຫ້ຄະນະປະຈຳ ສູນກາງແນວລາວສ້າງຊາດ ຮັບຊາບ.

ສະນັ້ນ, ຈຶ່ງແນະນຳມາຍັງປະທານແນວລາວສ້າງຊາດແຂວງ-ນະຄອນຫຼວງ ຮັບຊາບ ເພື່ອຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍຄຳແນະນຳສະບັບນີ້ໃຫ້ປະກົດຜົນເປັນຈິງ.

**ຄະນະກຳມະການສູນກາງແນວລາວສ້າງຊາດ**

**ປະທານ**

ສູນກາງແນວລາວສ້າງຊາດ

ປະທານ

**ປອ ໄຊສົມພອນ ພົມວິຫານ**